ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສານປະຊາຊົນສູງສຸດ

ເລກທີ ..41../ສປສສ

ນະຄອນຫຼວງວຽງຈັນ, ວັນທີ..6..../..6..../2013

# ຄຳແນະນຳ

## ຂອງປະທານສານປະຊາຊົນສູງສຸດ

ເຖິງ: ບັນດາຫົວໜ້າຄະນະສານ ຂອງສານປະຊາຊົນສູງສຸດ, ປະທານສານປະຊາຊົນທ້ອງຖິ່ນ ແລະ ສານທະຫານທຸກຂັ້ນ ໃນຂອບເຂດທົ່ວປະເທດ

ເລື່ອງ: ລະບຽບໃນທີ່ປະຊຸມສານ ເວລາອ່ານຄຳຕັດສິນ ຫຼືຄຳພິພາກສາ

ອີງຕາມ ມາດຕາ 21 ຂອງກົດໝາຍວ່າດ້ວຍສານປະຊາຊົນ ສະບັບປັບປຸງ ປີ 2009;

ອີງຕາມມາດຕາ 172 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງປີ 2012;

ຕາມເນື້ອໃນຂອງມາດຕາ 172 ວັກ 3 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2012 ກ່ຽວກັບລະບຽບປະຊຸມສານ ໃນເວລາອ່ານຄຳຕັດສິນ ແມ່ນໃຫ້ທຸກຄົນ ໃນທີ່ປະຊຸມສານຕ້ອງຢືນຂຶ້ນ ເພື່ອເຄົາລົບສານນັ້ນ ໃນການຈັດຕັ້ງປະຕິບັດຕົວຈິງ ເຫັນວ່າ ບໍ່ສອດຄ່ອງກັບສະພາບຕົວຈິງ.

ປະທານສານປະຊາຊົນສູງສຸດ ອອກຄຳແນະນຳດັ່ງນີ້:

1. ໃນເວລາອ່ານ ຄຳຕັດສິນ ຫຼື ຄຳພິພາກສາ ໃຫ້ຜູ້ເຂົ້າຮ່ວມປະຊຸມສານທັງໝົດຢືນຂຶ້ນຟັງ ແລະ ເຄົາລົບສານ ຍົກເວັ້ນຄະນະປະທານສານ, ຈ່າສານ ແລະ ໄອຍະການ ນອກຈາກນັ້ນ ແມ່ນປະຕິບັດຕາມລະບຽບກົດໝາຍ.
2. ໃນການຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ຖ້າພົບບັນຫາ ໃຫ້ລາຍງານເຖິງສານປະຊາຊົນສູງສຸດເພື່ອຄົ້ນຄ້ວາພິຈາລະນາແກ້ໄຂ.
3. ເມື່ອບັນດາຫົວໜ້າຄະນະສານ ຂອງສານປະຊາຊົນສູງສຸດ, ປະທານສານປະຊາຊົນທ້ອງຖິ່ນ ໄດ້ຮັບຄຳແນະນຳສະບັບນີ້ແລ້ວ ຈົ່ງນຳໄປເຜີຍແຜ່ໃຫ້ບັນດາ ຜູ້ພິພາກສາ, ຜູ້ຊ່ວຍຜູ້ພິພາກສາ, ຈ່າສານ ແລະ ວິຊາການ ທີ່ຂຶ້ນກັບສິດອຳນາດຂອງຕົນ ເພື່ອຈັດຕັ້ງປະຕິບັດຄຳແນະນຳຢ່າງເຂັ້ມງວດ.

ປະທານສານປະຊາຊົນສູງສຸດ

ຄຳພັນ ສິດທິດຳພາ

ບ່ອນສົ່ງ:

- ຄະນະປະຈຳສະພາແຫ່ງຊາດ 1 ສະບັບ(ເພື່ອຊາບ)
- ຫົວໜ້າອົງການໄອຍະການປະຊາຊົນ 1 ສະບັບ(ເພື່ອຊາບ)
- ກະຊວງຍຸຕິທຳ 1 ສະບັບ(ເພື່ອຊາບ)
- ບັນດາຄະນະສານ ແລະ ບັນດາກົມຂອງສານປະຊາຊົນສູງສຸດ ບ່ອນລະ 1 ສະບັບ(ເພື່ອປະຕິບັດ)
- ບັນດາປະທານສານປະຊາຊົນທ້ອງຖິ່ນແລະສານທະຫານທຸກຂັ້ນ(ເພື່ອປະຕິບັດ)
- ສຳເນົາໄວ້ 2 ສະບັບ.